ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ
ຫ້ອງການ ຄະນະກຳມະການຄຸ້ມຄອງແຫ່ງຊາດເພື່ອແກ້ໄຂ
ບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ

ເລກທີ ............./ຫຄຊກລ
ນະຄອນຫລວງວຽງຈັນ, ວັນທີ: 07 OCT 2020

## ບົດບັນທຶກກອງປະຊຸມວິຊາການ
## ວຽກງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ

**ຮຽນ:** ທ່ານ ຫົວໜ້າຫ້ອງການ ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ ທີ່ນັບຖື.

**ເລື່ອງ:** ຜົນສຳເລັດໃນການເປີດກອງປະຊຸມວິຊາການ ວຽກງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ຄັ້ງວັນທີ 30 ກັນຍາ 2020 ທີ່ຫ້ອງການ ຄຊກລ.

– ອີງຕາມ ໜັງສືສະເໜີ ຂອງໜ່ວຍງານຊ່ວຍເຫຼືອຜູ້ຖືກຮ້າຍຈາກ ລບຕ ສະບັບເລກທີ 558/ຫຄຊກລ, ລົງວັນທີ 29 ກັນຍາ 2020.

ໜ່ວຍງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ຫ້ອງການ ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ ຂໍຖືເປັນກຽດຮຽນມາຍັງ ທ່ານເພື່ອຊາບກ່ຽວກັບຜົນສຳເລັດໃນການເປີດກອງປະຊຸມວິຊາການ ວຽກງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ. ເຊິ່ງກອງປະຊຸມດັ່ງກ່າວ ໄດ້ຈັດຂຶ້ນວັນທີ 30 ກັນຍາ 2020 ທີ່ຫ້ອງປະຊຸມຫ້ອງການ ຄຊກລ ລາຍລະອຽດມີດັ່ງນີ້:

### 1. ຈຸດປະສົງ

– ກອງປະຊຸມແມ່ນເພື່ອລາຍງານການເຄືອນໄຫວປະຈຳໄຕມາດ ລາຍງານແຜນປະຈຳໄຕມາດ, ການປະສານລາຍລະຫວ່າງກະຊວງ ກັບ ຫ້ອງການ ຄຊກລ, ການປະກາດນຳໃຊ້ແບບຟອມການລາຍງານການເກີດອຸບັດຕິເຫດ, ແບບຟອມຜູ້ຖືກເຄາະຮ້າຍ ແລະ ແບບຟອມລາຍງານການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ, ສິ່ງທ້າທາຍໃນການຈັດຕັ້ງປະຕິບັດ, ແລກປ່ຽນບົດຮຽນຈາກການຈັດຕັ້ງປະຕິບັດຕົວຈິງ ຂອງແຕ່ລະອົງການປະ◌ໍາຕິບັດງານ, ເພື່ອຊຸກຍູ້ສະໜັບສະໜູນ ໃຫ້ກິດຈະກຳຂອງແຕ່ລະອົງການປະຕິບັດງານດຳເນີນໄປຕາມແຜນຢ່າງມີປະສິດທິຜົນຫຼາຍຂຶ້ນ ຖືກຕາມແນວທາງນະໂຍບາຍຂອງລັດຖະບານ.

### 2. ຜູ້ເຂົ້າຮ່ວມກອງປະຊຸມ.

ມີຄະນະຜູ້ແທນເຂົ້າຮ່ວມທັງໝົດ 22 ທ່ານ ໃນນັ້ນມີຄະນະຫ້ອງການ ຄຊກລ ສູນກາງ, ຕາງໜ້າ ໂຄງການເກັບກູ້ລະເບີດແຫ່ງຊາດ, ຕາງໜ້າ ສະມາຄົມຄົນພິການແຫ່ງຊາດ(**LDPA**), ຕາງໜ້າ ສູນກາງສະຫະພັນແມ່ຍິງລາວ, ຕາງໜ້າ ສູນການແພດຟື້ນຟູໜ້າທີ່ການ ກະຊວງສາທາລະນະສຸກ, ສູນການຮຽນຮ່ວມ ກະຊວງສຶກສາທິການ ແລະ ກິລາ, ຕາງໜ້າ ອົງການສຶກສາໂລກ, ຕາງໜ້າ ອົງການ ຮາໂຮທັດສ໌, ຕາງໜ້າ ອົງການ ເຣັດສ໌ໄອ, ຕາງໜ້າ ອົງການ ສປຊ ແລະ ຕາງໜ້າ ສະຖານທູດ ສ.ອາເມລິກາ. ໂດຍການເປັນປະທານຂອງ ທ່ານ ບຸນເພັງ ສີສະຫວັດ ຮອງຫົວໜ້າຫ້ອງການ ຄຊກລ ສູນກາງ.

**3. ການດຳເນີນກອງປະຊຸມ.**

- ນຳສະເໜີ ການເຄື່ອນໄຫວກ່ຽວກັບວຽກງານການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ປະຈຳໄຕມາດ 3 ໂດຍທ່ານ ບຸນຕາວ ຈັນທະວົງສາ ຫົວໜ້າໜ່ວຍງານຍຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ.
- ນຳສະເໜີ ແບບຟອມການລາຍງານການເກີດອຸບັດຕິເຫດ, ແບບຟອມຜູ້ຖືກເຄາະຮ້າຍ ແລະ ແບບຟອມລາຍງານການຊ່ວຍເຫຼືອຜູ້ຖືກເຄາະຮ້າຍທີ່ໄດ້ຮັບການຊ່ວຍເຫຼືອ ເພື່ອເປັນເອກະພາບໃນການນຳໃຊ້ລາຍງານ ໂດຍໜ່ວຍທ່ານ ບຸນຕາວ ຈັນທະວົງສາ ຫົວໜ້າໜ່ວຍງານຍຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ.
- ນຳສະເໜີ ແລະ ປຶກສາຫາລືກ່ຽວກັບການຄຸ້ມຄອງຂໍ້ມູນ ແລະ ການແລກປ່ຽນຂໍ້ມູນຂ່າວສານກັບບັນດາອົງການ ແລະ ບັນດາກະຊວງການ.
- ນຳສະເໜີ ກ່ຽວກັບໂຄງຮ່າງຍຸດທະສາດການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ໂດຍພະນັກງານວິຊາການ ສປຊ ປະຈຳລາວ.
- ປຶກສາຫາລືກ່ຽວກັບນິຕິກຳເຊັ່ນ: ກົດໝາຍ, ຍຸດທະສາດອື່ນໆ ທີ່ກ່ຽວຂ້ອງກັບການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ.
- ນຳສະເໜີ ກ່ຽວກັບແຜນປະຈຳປີ 2021 ກ່ຽວກັບວຽກງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ.
- ກອງປະຊຸມໄດ້ສັງລວມຂໍ້ສະເໜີ ແລະ ຂໍ້ແນະນຳຈາກຜູ້ເຂົ້າຮ່ວມກອງປະຊຸມ.

- **ຮູບແບບ:** ນຳສະເໜີ, ປະກອບຄວາມຄິດເຫັນ ແລະ ສະຫຼຸບ.

**4. ຜົນສຳເລັດຂອງກອງປະຊຸມ.**

ກອງປະຊຸມໄດ້ປຶກສາຫາລື ຜັນຂະຫຍາຍຂະຫຍາຍ ແລະ ຮັບຮູ້ ແຜນຍຸດທະສາດກ່ຽວກັບການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກລະເບີດບໍ່ທັນແຕກທີ່ຕົກຄ້າງຢູ່ ສປປ ລາວ ສຳລັບປີ 2021-2025, ແນວທາງນະໂຍບາຍຂອງພັກ , ແຜນພັດທະນາເສດຖະກິດ-ສັງຄົມຂອງລັດຖະບານໃນແຕ່ລະໄລຍະ, ພ້ອມທັງຜັນຂະຫຍາຍສົນທິສັນຍາສາກົນວ່າດ້ວຍສິດທິຂອງຄົນພິການ ແລະ ກົດໝາຍວ່າດ້ວຍຄົນພິການ, ກ່ຽວກັບການຄຸ້ມຄອງຂໍ້ມູນ ແລະ ກົນໄກການແລກ ປ່ຽນຂໍ້ມູນຂ່າວສານກັບບັນດາອົງການ ແລະ ບັນດາກະຊວງການ, ແຜນເຄື່ອນໄຫວປະຈຳໄຕມາດ 3 ແລະ ແຜນປະຈຳປີ 2021. ເຊິ່ງສາມາດສັງລວມຜົນສຳເລັດຂອງກອງປະຊຸມໄດ້ດັ່ງນີ້:

- ກອງປະຊຸມໄດ້ຮັບຟັງການນຳສະເໜີ ຂໍ້ສະດວກ, ຂໍ້ຫຍຸ້ງຍາກ ກ່ຽວກັບການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ຈາກ ລບຕ ຄວນຈະມີການປັບປຸງໃຫ້ຄ່ອງໂຕຫຼາຍຂຶ້ນ ໂດຍສະເພາະ ວຽກງານການປະສານງານ ດ້ານຂໍ້ມູນ ແລະ ເປົ້າໝາຍການຊ່ວຍເຫຼືອ ຄວນແທດເໝາະກັບສະພາບເປັນຈິງ;
- ຮັບປະກັນ ເອກະພາບກັນໃນການນຳໃຊ້ແບບຟອມການລາຍງານການເກີດອຸບັດຕິເຫດ, ແບບຟອມຜູ້ຖືກເຄາະຮ້າຍ ແລະ ແບບຟອມລາຍງານການຊ່ວຍເຫຼືອຜູ້ຖືກເຄາະຮ້າຍທີ່ໄດ້ຮັບການຊ່ວຍເຫຼືອ ແລະ ແກ້ໄຂບາງສ່ວນຂອງແບບຟອມທີ່ຍັງບໍ່ເໝາະສົມ;
- ກອງປະຊຸມໄດ້ຍົກໃຫ້ເຫັນ ບົດບາດຄວາມສຳຄັນໃນການຄຸ້ມຄອງຂໍ້ມູນ ວົງຈອນ ຂັ້ນຕອນໃນການຮັບຂໍ້ມູນ ແລະ ວິເຄາະຂໍ້ມູນ ກ່ອນທີ່ຈະປ້ອນຂໍ້ມູນເຂົ້າຖານຂໍ້ມູນແຫ່ງຊາດ ແລະ ທາງຫ້ອງການ ຄຊກລ ພ້ອມທີ່ຈະໃຫ້ຄວາມຊ່ວຍເຫຼືອໃນການຕິດຕັ້ງລະບົບຖານຂໍ້ມູນ ອີມສະມາ ພ້ອມກັບເຝິກອົບຮົມ ໃຫ້ກັບບັນດາອົງການ ແລະ ກະຊວງການ;